ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ: 927 / ຖວທ

ນະຄອນຫລວງວຽງຈັນ, ວັນທີ: 25 ພະຈິກ 2021

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະບໍລິຫານງານ ແລະ ສະມາຊິກເຄືອຂ່າຍ ພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດຫມາຍປາຍທາງການທ່ອງທ່ຽວຂອງ ສປປ ລາວ (Laos National Destination Management Network Board and Members)

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 513/ນຍ, ລົງວັນທີ 18/09/2020 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
- ອີງຕາມ ສັນຍາເງິນກູ້ຍືມລະຫວ່າງລັດຖະບານຂອງ ສປປ ລາວ ແລະ ທະນາຄານພັດທະນາອາຊີ ສຳລັບໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວອະນຸພາກພື້ນແມ່ນ້ຳຂອງໄລຍະ 1 ໃນ ສປປ ລາວ, ເລກທີ Loan No. 3156 – LAO, ລົງວັນທີ 27/10/2014;
- ອີງຕາມ ສັນຍາເງິນຊ່ວຍເຫລືອລ້າລະຫວ່າງລັດຖະບານຂອງ ສປປ ລາວ ແລະ ທະນາຄານພັດທະນາອາຊີ ກ່ຽວກັບການໃຫ້ການຊ່ວຍເຫລືອລ້າໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວອະນຸພາກພື້ນແມ່ນ້ຳຂອງໄລຍະ 2 ໃນ ສປປ ລາວ, ເລກທີ Grant No. 0599 – LAO, ລົງວັນທີ 16/10/2018;
- ອີງຕາມ ຫນັງສືແຈ້ງຕອບຂອງກົມພັດທະນາການທ່ອງທ່ຽວ (ເລກທີ 1043/ກພທ), ກົມໂຄສະນາການທ່ອງທ່ຽວ (ເລກທີ 443/ຄສທ), ກົມຄຸ້ມຄອງການທ່ອງທ່ຽວ (ເລກທີ 812/ຄກທ), ສະຖາບັນສີ່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ (ເລກທີ 397/ສສວທ) ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ເລກທີ 1089/ສຄອຊ.ສຜວ) ກ່ຽວກັບການປະກອບລາຍຊື່ເຂົ້າໃນຄະນະບໍລິຫານງານ ແລະ ສະມາຊິກເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດ ຫມາຍປາຍທາງການທ່ອງທ່ຽວຂອງ ສປປ ລາວ;
- ອີງຕາມ ການຕົກລົງເຫັນດີເປັນເອກະພາບຂອງກອງປະຊຸມຜ່ານຮ່າງຂໍ້ຕົກລົງຂອງລັດຖະມົນຕີ ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ວ່າດ້ວຍການປັບປຸງໂຄງປະກອບຄະນະບໍລິຫານງານເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດຫມາຍປາຍທາງການທ່ອງທ່ຽວຂອງ ສປປ ລາວ, ຄັ້ງວັນທີ 28 ຕຸລາ 2021.

**ລັດຖະມົນຕີ ຕົກລົງ:**

**ມາດຕາ 01:** ແຕ່ງຕັ້ງຄະນະບໍລິຫານງານເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດຫມາຍປາຍທາງການທ່ອງທ່ຽວຂອງ ສປປ ລາວ ດັ່ງລາຍຊື່ລຸ່ມນີ້:

1. ທ່ານ ນາງ ພອນມະລີ ອິນທະພົມ, ຫົວຫນ້າກົມພັດທະນາການທ່ອງທ່ຽວ ເປັນຫົວຫນ້າ;
2. ທ່ານ ອິນທີ ເດືອນສະຫວັນ, ຮອງປະທານຄະນະກຳມາທິການທ່ອງທ່ຽວ, ສຄອຊ ເປັນຮອງ;
3. ທ່ານ ສົມໄຊ ສີປະເສີດ, ຮອງຫົວຫນ້າກົມພັດທະນາການທ່ອງທ່ຽວ ເປັນຄະນະ;

4. ທ່ານ ນາງ ມະນີສາຄອນ ທຳມະວົງໄຊ, ຮອງຫົວໜ້າກົມໂຄສະນາການທ່ອງທ່ຽວ ເປັນຄະນະ;
5. ທ່ານ ນາງ ສີພອນໄພ ສິດທິໄຊ, ຮອງຫົວໜ້າກົມຄຸ້ມຄອງການທ່ອງທ່ຽວ ເປັນຄະນະ;
6. ທ່ານ ບຸນທັນ ກົມມະທັບ, ຮອງຫົວໜ້າສະຖາບັນສີ່ມອນຊີນ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;
7. ທ່ານ ນາງ ດວງມາລາ ພົມມະວົງ, ຄະນະກຳມາທິການທ່ອງທ່ຽວ, ສຄອຊ ເປັນຄະນະ;
8. ທ່ານ ປະກາສິດ ຈັນທະປັນຍາ, ຄະນະກຳມາທິການທ່ອງທ່ຽວ, ສຄອຊ ເປັນຄະນະ;
9. ທ່ານ ພູວົງ ພະນີສິດ, ຄະນະກຳມາທິການທ່ອງທ່ຽວ, ສຄອຊ ເປັນຄະນະ;
10. ທ່ານ ນາງ ສຸວິດາ ປະເສີດ, ຄະນະກຳມາທິການທ່ອງທ່ຽວ, ສຄອຊ ເປັນຄະນະ.

➢ **ໜ້າທີ່ຂອງຄະນະບໍລິຫານງານເຄືອຂ່າຍ:**

-ໃຫ້ທິດຊີ້ນຳໃນການສ້າງ, ຈັດຕັ້ງປະຕິບັດ ແລະ ທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກຳພາກລັດ ແລະ ພາກທຸລະກິດ ໃນການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວຂອງ ສປປ ລາວ ປະຈຳປີ ຜ່ານກອງປະຊຸມເຄືອຂ່າຍທີ່ຈະໄດ້ຈັດຂຶ້ນຢ່າງໜ້ອຍ 2 ຄັ້ງຕໍ່ປີ ໂດຍການເປັນເຈົ້າການຮ່ວມກັນລະຫວ່າງກະຊວງ ຖວທ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ). ຜູ້ເຂົ້າຮ່ວມກອງປະຊຸມເຄືອຂ່າຍແມ່ນປະກອບມີ ຄະນະບໍລິຫານງານ, ສະມາຊິກ, ກອງເລຂາ, ໂຄງການ ແລະ ອົງການຈັດຕັ້ງສາກົນໃນຂະແໜງການທ່ອງທ່ຽວ. ພາກລັດຈາກກະຊວງອື່ນ ແລະ ພາກທຸລະກິດທີ່ບໍ່ໄດ້ກຳນົດຢູ່ໃນໂຄງປະກອບເຄືອຂ່າຍຈະຖືກເຊີນເຂົ້າຮ່ວມກອງປະຊຸມອີງຕາມຫົວຂໍ້ການສົນທະນາ (ແຜນວາດທີ 1: ໂຄງປະກອບເຄືອຂ່າຍ DMN ຂັ້ນສູນກາງ);

-ເປັນເຈົ້າການໃນການນຳເອົາບັນຫາ ແລະ ອຸປະສັກໃນການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ ທີ່ຖືກຍົກຂຶ້ນໃນກອງປະຊຸມເຄືອຂ່າຍເຊິ່ງຕິດພັນກັບຂະແໜງການ ຫລື ກະຊວງອື່ນ ສະເໜີຕໍ່ການນຳຂອງກະຊວງ ຖວທ ເພື່ອເປັນຂໍ້ຕໍ່ປະສານງານກັບກະຊວງທີ່ກ່ຽວຂ້ອງ.

**ມາດຕາ 02:** ແຕ່ງຕັ້ງສະມາຊິກເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວຂອງ ສປປ ລາວ ດັ່ງລາຍຊື່ລຸ່ມນີ້:

1. ທ່ານ ນາງ ເພັນປະພາ ພົງສາ, ຫົວໜ້າພະແນກ, ສະຖາບັນສີ່ມອນຊີນ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ທ່ານ ສະເຫລີມ ໄຕຍະລາດ, ຮອງຜູ້ອຳນວຍການລັດວິສາຫະກິດການບິນລາວ;
3. ທ່ານ ນາງ ມະນີຈັນ ຜັນຫວາດວົງສຸກ, ຜູ້ອຳນວຍການບໍລິສັດທ່ອງທ່ຽວເອັມພີຫົວ;
4. ທ່ານ ວິມານ ພານິດ, ຜູ້ອຳນວຍການບໍລິສັດທ່ອງທ່ຽວຈັກກະວານ;
5. ທ່ານ ນາງ ພອນມະນີ ສຸຂະທຳມະວົງ, ຮອງຫົວໜ້າພະແນກ, ກົມພັດທະນາການທ່ອງທ່ຽວ;
6. ທ່ານ ນາງ ພູວັນ ໄຊເສນາ, ຮອງຫົວໜ້າພະແນກ, ກົມໂຄສະນາການທ່ອງທ່ຽວ;
7. ທ່ານ ແພງສອນ ຊຸນສຳນານ, ຮອງຫົວໜ້າພະແນກ, ກົມຄຸ້ມຄອງການທ່ອງທ່ຽວ;
8. ທ່ານ ສຸວັນນີກອນ ຜາຕັນ, ວິຊາການ, ກົມພັດທະນາການທ່ອງທ່ຽວ;
9. ທ່ານ ສົມຊາຍ ຈິງຮືມືວ, ວິຊາການ, ກົມໂຄສະນາການທ່ອງທ່ຽວ;
10. ທ່ານ ນາງ ລັດຕະນາ ຈັນດາຄຳ, ວິຊາການ, ກົມຄຸ້ມຄອງການທ່ອງທ່ຽວ;

11. ທ່ານ ສົມພະມິດ ສຸປັນຍາ, ວິຊາການ, ສະຖາບັນສົ່ມອນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ;
12. ທ່ານ ນາງ ຄຳບາງ ອິນຄຳ, ວິຊາການ, ພະແນກສົ່ງເສີມຜະລິດຕະພັນ ແລະ ວາງສະແດງ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ຜູ້ປະສານງານຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ).

ນອກຈາກສະມາຊິກທີ່ຖືກແຕ່ງຕັ້ງແລ້ວ, ເຄືອຂ່າຍຍັງສາມາດລະດົມສະມາຊິກໃຫ້ເຂົ້າຮ່ວມຫລາຍຂຶ້ນຕື່ມໃນຕໍ່ໜ້າ ນັບທັງພາກລັດ ແລະ ພາກທຸລະກິດ ເພື່ອເຮັດໃຫ້ຫລາຍພາກສ່ວນມີສ່ວນຮ່ວມໃນການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວຂອງ ສປປ ລາວ.

➢ໜ້າທີ່ຂອງສະມາຊິກເຄືອຂ່າຍ:

-ມີໜ້າທີ່ປະກອບຄຳຄິດຄຳເຫັນເຂົ້າໃນການສ້າງ, ຈັດຕັ້ງປະຕິບັດ ແລະ ທົບທວນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກຳພາກລັດ ແລະ ພາກທຸລະກິດ ໃນການພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວຂອງ ສປປ ລາວ ປະຈຳປີ ຜ່ານກອງປະຊຸມເຄືອຂ່າຍທີ່ຈະໄດ້ຈັດຂຶ້ນຢ່າງໜ້ອຍ 2 ຄັ້ງຕໍ່ປີ ໂດຍການເປັນເຈົ້າການຮ່ວມກັນລະຫວ່າງກະຊວງ ຖວທ ແລະ ສຄອຊ.

**ມາດຕາ 03:** ສຳລັບງົບປະມານໃນການເຄື່ອນໄຫວວຽກງານຂອງເຄືອຂ່າຍ DMN ແມ່ນໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2 ເປັນຜູ້ສະໜັບສະໜູນ.

**ມາດຕາ 04:** ບັນດາກົມກ່ຽວຂ້ອງ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ເພື່ອເຮັດໃຫ້ບັນລຸຕາມເປົ້າໝາຍທີ່ໄດ້ກຳນົດໄວ້.

**ມາດຕາ 05:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 753/ຖວທ, ລົງວັນທີ 06/07/2015

ຮອງລັດຖະມົນຕີ

(ຜູ້ຊີ້ນຳວຽກງານໂຄງການ)

ອຸ່ນທວງ ຂາວພັນ

**ແຜນວາດທີ 1: ໂຄງປະກອບເຄືອຂ່າຍ DMN ຂັ້ນສູນກາງ**

<u>ຫົວໜ້າຄະນະບໍລິຫານງານເຄືອຂ່າຍ</u>
ຫົວໜ້າກົມພັດທະນາການທ່ອງທ່ຽວ
ກະຊວງ ຖວທ

ເພດຍິງກວມເອົາ 50%, ເປົ້າໝາຍແມ່ນຢ່າງໜ້ອຍ 30%

<u>ຮອງຫົວໜ້າຄະນະບໍລິຫານງານເຄືອຂ່າຍ</u>
ຮອງປະທານຄະນະກຳມາທິການທ່ອງທ່ຽວ
ສຄອຊ

<u>ຄະນະບໍລິຫານງານເຄືອຂ່າຍ</u>
- ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ, ຮອງຫົວໜ້າກົມໂຄສະນາການທ່ອງທ່ຽວ, ຮອງຫົວໜ້າກົມຄຸ້ມຄອງການທ່ອງທ່ຽວ ແລະ ຮອງຫົວໜ້າສະຖາບັນສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ
- ຄະນະກຳມະທິການທ່ອງທ່ຽວ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

ເພດຍິງກວມເອົາ 50%, ເປົ້າໝາຍແມ່ນຢ່າງໜ້ອຍ 40%

<u>ກອງເລຂາເຄືອຂ່າຍ</u>
ກະຊວງ ຖວທ

<u>ສະມາຊິກເຄືອຂ່າຍ</u>
- ຄະນະພະແນກ ແລະ ວິຊາການຈາກກົມພັດທະນາການທ່ອງທ່ຽວ, ກົມໂຄສະນາການທ່ອງທ່ຽວ, ກົມຄຸ້ມຄອງການທ່ອງທ່ຽວ ແລະ ສະຖາບັນສື່ມວນຊົນ, ວັດທະນະທຳ ແລະ ທ່ອງທ່ຽວ
- ຄະນະກຳມະທິການທ່ອງທ່ຽວ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ
- ພາກທຸລະກິດໃນຂະແໜງການທ່ອງທ່ຽວ
- ຜູ້ປະສານງານຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

<u>ພາກສ່ວນເຂົ້າຮ່ວມກອງປະຊຸມເຄືອຂ່າຍ</u>
- ພາກລັດພາຍໃນກະຊວງ ຖວທ ແລະ ຈາກກະຊວງອື່ນ ອີງຕາມຫົວຂໍ້ການສົນທະນາ
- ພາກທຸລະກິດ
- ໂຄງການ ແລະ ອົງການຈັດຕັ້ງສາກົນໃນຂະແໜງການທ່ອງທ່ຽວ